**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດ ທີ 11 ມີນາ 2007 (03 -11- 2007)**

---

# <u>ພຣະເຢຊູຊົງເປີດຕາຂອງພວກເຮົາ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ( ໂຢຮັນ 9:8-10, 20-22, 24-25, 30-33, 35-39

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເມື່ອຄົນຜູ້ນຶ່ງໄດ້ຮັບການຊົງປ່ຽນແປງຊີວິດໂດຍພຣະເຢຊູແລ້ວ, ບໍ່ມີຜູ້ໃດຈະສາມາດຍາດແຍ່ງເອົາຊະນະໄດ້ວ່າປະສົບການທີ່ລາວໄດ້ຮັບນັ້ນໃຊ້ປໂຍດອັນໃດບໍ່ໄດ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນໄດ້ຈັດຕຽມແລະເລືອກໄວ້ເພື່ອຈະຊ່ວຍໃຫ້ທ່ານໄດ້ຄົ້ນພົບເຖິງສິ່ງທີ່ພຣະເຢຊູໄດ້ຊົງເຮັດເພື່ອພວກເຮົາໂດຍ:

* ຮູ້ເຂົ້າໃຈການມີປະສົບການກັບພຣະເຢຊູເປັນການສ່ວນຕົວເປັນສິ່ງຈຳເປັນແລະເປັນກຳລັງທີ່ຈະຮັກສາຄວາມເຊື່ອໄວ້; ແລະ
* ການນະມັສການກັບຜູ້ທີ່ສາມາດຊ່ວຍໃຫ້ຕາບອດຝ່າຍຈິດວິນຍານຂອງທ່ານໄດ້ເຫັນຮຸ່ງເຖິງເຣື່ອງຄວາມເຊື່ອ

## <u>ແມ່ນຫຍັງທີ່ເປັນກຸນແຈໄຂໄປສູ່ຄວາມຮູ້ເພື່ອທີ່ຈະໄດ້ມີຄວາມແນ່ໃຈວ່າມີຄວາມຄວາມເຊື່ອເທົ່ານັ້ນກໍພຽງພໍແລ້ວ?</u>

ຫລາຍປີມາແລ້ວທີ່ມາເລັຽໄດ້ຫລີກໜີຈາກໂບດເໝືອນກັບວ່າມັນເປັນໂຣກຕິດຕໍ່. ລາວມີຄວາມອົບອຸ່ນກັບຊີວິດໃນທາງທີ່ລາວເລືອກເດີນຄືບໍ່ຕ້ອງມີຜູ້ໃດມາຫຍຸ້ງກ່ຽວສັ່ງສອນໃຫ້ຢູ່ໃນຂອບເຂດຂອງຊີວິດ. ລາວບໍ່ເຫັນວ່າມີເຫດຜົນອັນໃດທີ່ຈະຕ້ອງອ່ານພຣະຄັມພີ, ອະທິຖານ, ແລະບໍ່ໄດ້ສົນໃຈໃນການທີ່ຈະກັບໄປຮ່ວມນະມັສການທີ່ໂບດ. ເມື່ອນ້ອງຊາຍຂອງລາວໄດ້ຕາຍໄປຍ້ອນໂຣກມະເຮັງ, ມາເລັຽກໍເລີ້ມກັບຄືນໄປອ່ານພຣະຄັມພີ, ອະທິຖານ, ແລະໃນທີ່ສຸດກໍມີຄວາມຮູ້ສຶກວ່າລາວຕ້ອງການທີ່ຈະມີພຣະຄຣິດໃນຊີວິດຂອງລາວ. ຕັ້ງແຕ່ມີຄວາມເຊື່ອໝັ້ນໃນພຣະຄຣິດແລະໃນທັນທີນັ້ນຊີວິດກໍຈະເລີ້ມມີການປ່ຽນແປງ. ບໍ່ດົນຫລັງຈາກທີ່ລາວກໍໄດ້ຮັບການໜູນໃຈແລະແນະນຳຈາກອາຈານທີ່ໂບດຂອງລາວ. ລາວເວົ້າວ່າ, "ຂ້ານ້ອຍບໍ່ເຂົ້າໃຈວ່າເປັນຫຍັງຫລາຍຄົນຈຶ່ງບໍ່ເຫັນຄວາມສຳຄັນວ່າເຂົາຕ້ອງການພຣະເຢຊູແລະອາຈານຂອງລາວກໍໄດ້ຕອບເພື່ອເປັນການເຕືອນລາວວ່າ ຕ້ອງໃຊ້ເວລາຫລາຍປີຕາຂອງນາງເອງຈຶ່ງໄດ້ເປີດອອກເຫັນເຖິງຄວາມຈິງ. ແລະເປັນບົດຮຽນສອນໃຈໃຫ້ລາວມີຄວາມອົດທົນໃຫ້ເວລາກັບຜູ້ທີ່ນາງໄປເປັນພະຍານໃຫ້.

ຄວາມຈິງອັນໃດທີ່ທ່ານຄິດວ່າເປັນສິ່ງທີ່ບັງຕາຂອງຄົນຈຳນວນຫລວງຫລາຍບໍ່ໃຫ້ເຂົາເຈົ້າເຫັນວ່າເຂົາເຈົ້າຕ້ອງການພຣະເຢຊູ? ແມ່ນສະຖານະການແບບໃດທີ່ເປັນສາຍເຫດນຳພາຄົນໃຫ້ເລີ້ມເປີດຕາຂອງຕົນເອງເພື່ອທີ່ຈະເຫັນຄວາມຈິງ? ແມ່ນຫຍັງຄືສິ່ງທີ່ພຣະເຢຊູຈະຕ້ອງໃຊ້ໃນການເຮັດໃຫ້ເຫັນຮຸ່ງ?

## <u>ສຶກສາພຣະຄັມພີ</u>

1. **<u>ເຮົານີ້ແຫລະແມ່ນຄົນນັ້ນ.</u>** (ໂຢຮັນ 9:8-10 )

ຄຳວ່າຕາບອດນີ້ບໍ່ໄດ້ໝາຍເຖິງຕາທາງດ້ານຮ່າງກາຍແຕ່ໝາຍເຖິງຕາບອດຝ່າຍຈິດວິນຍານ. ໃນເວລານີ້ເຮົາຄວນຈະສົນໃຈໃນການບອດທາງດ້ານຈິດວິນຍານໃຫ້ຫລາຍກວ່າເພາະຈະມີຜົນສະທ້ອນບໍ່ພຽງແຕ່ເວລາທີ່ຍັງມີຊີວິດ

ຢູ່ໃນໂລກນີ້ເທົ່ານັ້ນແຕ່ຈະມີຜົນໄປເຖິງຊີວິດນິຣັນອີກ. ພຣະເຢຊູຊົງໃຊ້ການປິ່ນປົວທາງດ້ານຮ່າງກາຍແລະມີຜົນໃນການເປີດຕາຝ່າຍຈິດວິນຍານຂອງລາວນຳ ( ໂຢຮັນ 9:39 ).

ໃນລະຫວ່າງການເດີນທາງຂອງພຣະອົງ, ພຣະເຢຊູໄດ້ຊົງປິ່ນປົວຄົນຕາບອດມາແຕ່ກຳເນີດຜູ້ນຶ່ງ. ພວກຫົວໜ້ານັກທັມໄດ້ຖາມຫາສາຍເຫດທີ່ລາວຕາບອດ, ກ່າວໂທດວ່າຍ້ອນຄວາມບາບຂອງລາວເອງຫລືພໍ່ແມ່ຂອງລາວໄດ້ເຮັດບາບ. ພຣະເຢຊູຊົງຕອບດັ່ງນີ້ ( ການທີ່ຊາຍຄົນນີ້ຕາບອດກໍເພື່ອພຣະອົງຈະໄດ້ປິ່ນປົວລາວຫລືທັງສອງຢ່າງ ) ເພື່ອໃຫ້ພຣະຣາຊກິດຂອງພຣະເຈົ້າປາກົດໃນຕົວຊາຍຜູ້ນີ້. ພຣະອົງຊົງປິ່ນປົວອາການຕາບອດຂອງລາວດ້ວຍການເອົາຕົມມາຕິດທີ່ຕາຂອງລາວແລ້ວບອກໃຫ້ລາວໄປລ້າງທີ່ສະໂລອາມ. ຊາຍຕາບອດກໍປະຕິບັດຕາມ, ແລະທັນໃດນັ້ນຕາຂອງລາວກໍມືນຂຶ້ນເຫັນຮຸ່ງ.

ພວກຄົນໃກ້ຄຽງບໍ່ຢາກຈະເຊື່ອວ່າແມ່ນຊາຍຜູ້ນີ້ທີ່ເຄີຍເປັນຄົນຕາບອດມາກ່ອນແຕ່ດຽວນີ້ເຫັນຮຸ່ງແລ້ວ. ບາງທີພວກເຂົາອາດຈະເບິ່ງເຫັນຄວາມແຕກຕ່າງກັບຕອນທີ່ຕາບອດ ແລະດຽວນີ້ເປັນຄົນເຫັນແຈ້ງເພາະແຕ່ກ່ອນເປັນຄົນຂໍທານ, ແລະດຽວນີ້ພວກເຂົາໄດ້ເຫັນການປ່ຽນແປງໃນເຣື່ອງທີ່ລາວຮູ້ພຣະເຢຊູ.

ຊາຍຜູ້ນີ້ທີ່ມີຄວາມຊື່ນຊົມຍິນດີແລະສັຣເສີນພຣະເຢຊູຢ່າງເຫລືອລົ້ນທີ່ລາວໄດ້ສະແດງອອກມາ ແມ່ນເຮັດໃຫ້ພວກເຂົາບໍ່ຢາກຈະຍອມເຊື່ອວ່າເປັນຄົນດຽວກັນ. ທ່ານເດເຄີຍໄດ້ພົບເຫັນເຫດການຢ່າງນີ້ໄດ້ເກີດຂຶ້ນແທ້ໃນຊີວິດຂອງຜູ້ໃດຜູ້ນຶ່ງທີ່ທ່ານຮູ້ຈັກມີບໍ່ ຄືມີການປ່ຽນແປງໃນຊີວິດໃນທັນທີທັນໃດຍ້ອນການໄດ້ສຳຜັດກັບການຊົງນຳຂອງພຣະເຢຊູ? ກໍຄືກັນກັບຊາຍຕາບອດທີ່ເປັນຂໍທານແຕ່ດຽວນີ້ມີຊີວິດໃໝ່ທີ່ເຕັມບໍຣິບູນຄືລາວໄດ້ເຫັນຮຸ່ງແລ້ວ.

## ໒. <u>ຈົ່ງຖາມລາວເອງ, ເພາະອາຍຸຂອງລາວກໍພົ້ນກະສຽນແລ້ວ</u> ( ໂຢຮັນ 9:໒0-໒໒ )

ພວກນັກທັມໄດ້ນຳຊາຍຜູ້ນີ້ທີ່ເຄີຍຕາບອດມາສອບຖາມ, ເຂົາບໍ່ໄດ້ຫາສາຍເຫດທີ່ຈະຈັບລາວແຕ່ຊອກຫາເຣື່ອງທີ່ຈະຈັບຜູ້ທີ່ປົວຕາຂອງລາວ. ເຖິງຢ່າງໃດຊາຍຜູ້ນີ້ກໍບໍ່ໄດ້ປະຕິເສດໃນເຣື່ອງຣິດອຳນາດໃນການປິ່ນປົວຂອງພຣະເຢຊູ ພວກເຂົາຊອກຫາເຫດຜົນຂອງເຣື່ອງນີ້, ໂດຍສອບຖາມພໍ່ແມ່ຂອງລາວເພື່ອຈະໄດ້ຫາສາຍເຫດຕໍ່ສູ້ວ່າຊາຍຜູ້ນີ້ບໍ່ໄດ້ຕາບອດມາແຕ່ກຳເນີດ, ຈົນກວ່າຈະໄດ້ຄຳອະທິບາຍຈາກພໍ່ແມ່ຂອງລາວ.

ພໍ່ແມ່ກໍໄດ້ຢັ້ງຢືນວ່າລາວຕາບອດ, ແຕ່ພວກເຂົາກໍພະຍາຍາມທີ່ຈະຫລີກເວັ້ນການຕອບທີ່ກ່ຽວກັບພຣະເຢຊູວ່າລາວເຫັນຮຸ່ງໄດ້ແນວໃດກໍເພາະຢ້ານພວກຢິວຈະອອກຈາກໂຮງທັມມະເທສນາ ເພາະຖ້າຜູ້ໃດຍອມຮັບວ່າພຣະເຢຊູເປັນພຣະເມສີອາກໍຈະຖືກໄລ່ອອກໄປຄືກັນ. ພວກຫົວໜ້ານັກທັມແມ່ນບໍ່ໄດ້ສົນໃຈໃນເຣື່ອງຄວາມຈິງທີ່ເກີດຂຶ້ນແຕ່ພວກເຂົາຈະຫາເຣື່ອງໃຫ້ພົ້ນຈາກການພົວພັນກັບພຣະເຢຊູຕ່າງຫາກ.

ພໍ່ແມ່ຂອງຊາຍຜູ້ທີ່ເຄີຍຕາບອດຜູ້ນີ້ໄດ້ພະຍາມຍາມຫລີກຈາກການຕອບຄຳຖາມທີ່ກ່ຽວພັນກັບພຣະເຢຊູຍ້ອນວ່າລູກຂອງເຂົາໄດ້ຍອມຮັບວ່າພຣະເຢຊູແມ່ນພຣະເມສີອາ ( ຢຮ. 9:30-33 ). ພວກເຂົາເວົ້າບອກວ່າ " ຈົ່ງຖາມລາວເອງ, ເພາະອາຍຸຂອງລາວກໍພົ້ນກະສຽນແລ້ວ. " ພວກພໍ່ແມ່ຂອງລາວຢ້ານວ່າພວກຫົວໜ້ານັກທັມຈະຂົ່ມເຫງບໍ່ໃຫ້ພວກເຂົາມີຄວາມຊົມຊື່ນຍິນດີໃນເຣື່ອງທີ່ລູກຂອງພວກເຂົາໄດ້ເຫັນຮຸ່ງແລ້ວ. ເພາະລູກຂອງເຂົາວັນນີ້ເຫັນຮຸ່ງ, ຍ່າງໄປມາ, ເວົ້າຈາປາໃສແລະປະກາດຂ່າວປະເສີດເຣື່ອງຂອງພຣະເມສີອາ. ພວກເຂົາມີຄວາມລະອາຍໃນການກະທຳຂອງລູກຊາຍຫລືເຂົາບໍ່ເຫັນພ້ອມໃນຕອນສລູບສຸດທ້າຍ? ໃນພຣະທັມກໍບໍ່ມີບັນທຶກຄຳຕອບໄວ້. ຫລາຍຄັ້ງທີ່ຄົນຜູ້ໃດຜູ້ນຶ່ງທີ່ຫັນປ່ຽນຊີວິດມາຕິດຕາມພຣະຄຣິດ, ພວກຜູ້ຄົນທີ່ຢູ່ອ້ອມຂ້າງກໍບໍ່ຢາກຈະເຊື່ອແລະຍອມຮັບໄດ້ງ່າຍໆ ໃນເຣື່ອງຂອງຂ່າວປະເສີດ.

ເມື່ອທ່ານມີຄວາມເຊື່ອວ່າພຣະເຢຊູຄືພຣະເມສີອາແລະພຣະອົງໄດ້ຊົງເປີດຕາຂອງທ່ານໃຫ້ເຫັນຮຸ່ງແລ້ວ, ຜູ້ອື່ນມີຄວາມຮູ້ສຶກຫຍຸ້ງຍາກໃຈທີ່ຈະຍອມຮັບການປ່ຽນແປງທີ່ໄດ້ເກີດຂຶ້ນໃນຊີວິດຂອງທ່ານບໍ່? ພວກເຂົາບໍ່ເຂົ້າໃຈໃນການສະແດງອອກທີ່ແຕກຕ່າງໃນເຣື່ອງຄວາມເຊື່ອຂອງທ່ານ? ພວກຄົນທີ່ຕາບອດຍ່ອມເປັນການຍາກທີ່ພວກເຂົາຈະຍອມຮັບວ່າໃນຂນະນີ້ທ່ານໄດ້ເຫັນຮຸ່ງແລ້ວ!

### 3. <u>ສິ່ງດຽວທີ່ຂ້ານ້ອຍຮູ້</u> ( ໂຢຮັນ 9:24-25,30-33 )

ເມື່ອຫົວຫນ້າພວກນັກທັມໄດ້ໂຈດຖາມພໍ່ແມ່ຂອງຊາຍທີ່ເຄີຍຕາບອດນັ້ນແລ້ວພວກເຂົາກໍເອີ້ນເອົາຊາຍຜູ້ນັ້ນມາ
ສອບຖາມອີກເປັນຄັ້ງທີສອງແລ້ວບອກລາວວ່າ " ຈົ່ງສັຣເສີນຣະເຈົ້າ "(ເປັນຄໍາສາບານທີ່ຈະເວົ້າແຕ່ຄວາມຈິງ) ການ
ກະທໍາເຊັ່ນນີ້ຂອງພວກຫົວຫນ້ານັກທັມແມ່ນເພື່ອເຂົາຈະໄດ້ຜົນປໂຍດໃນເຣື່ອງການປົກຄອງຂອງພວກເຂົາ. ຄືເຂົາ
ໄດ້ພະຍາຍາມໃຊ້ຄໍາເວົ້າຫວ່ານລ້ອມ ເພື່ອເຮັດໃຫ້ຊາຍຄົນທີ່ເຄີຍຕາບອດນັ້ນຍອມຮັບວ່າພຣະເຢຊູເປັນຄົນບາບຈົ່ງ
ເບິ່ງ ໃນ ຂໍ້ 24. ສາຍເຫດທີນື່ງເພື່ອຈະແຍກພຣະເຢຊູອອກຈາກພຣະເຈົ້າ, ແລະສາຍເຫດທີສອງເພື່ອຈະໃຫ້ພຣະເຢຊູ
ເປັນຄົນບາບ.

ຊາຍຜູ້ນີ້ທີ່ເຄີຍຕາບອດບໍ່ມີຄວາມຮູ້ຫລືໄດ້ຖືກແອບສອນໃນເຣື່ອງຈິຕວິທະຍາມາກ່ອນ. ສະນັ້ນລາວຈື່ງບໍ່ສາ
ມາດທີ່ຈະອະທິບາຍວ່າພຣະເຢຊູບໍ່ໄດ້ມີຄວາມຜິດບາບຫລືການຊົງເປັນບຸດມະນຸດຂອງພຣະຄຣິດ, ແຕ່ລາວຮູ້ພຽງ**ສິ່ງ
ດຽວ**ທີ່ເປັນຄວາມເຊື່ອອັນຫມັ້ນຄົງ **" ຂ້ານ້ອຍຮູ້ແຕ່ສິ່ງດຽວວ່າຄືແຕ່ກ່ອນຂ້ານ້ອຍເປັນຕາບອດ ແຕ່ດຽວນີ້ຂ້ານ້ອຍ
ເຫັນໄດ້ແລ້ວ! "**. ຍ້ອນວ່າພື້ນຖານຂອງວິຊາຈິດຕະວິທະຍາແລະສາສນາທີ່ພວກເຂົາພາກັນປະຕິບັດແມ່ນໃຊ້ການບໍ່
ໄດ້ແລະທັງເປັນອັນຕະລາຍ ເພາະມີຫລາຍຕອນໃນພຣະຄັມພີທີ່ພວກເຂົາຕີຄວາມຫມາຍລັກສນະຂອງພຣະເຈົ້າໃນ
ທາງກົງກັນຂ້າມ . ເພື່ອຈະໃຫ້ເຫັນສິ່ງໃຫມ່ເກີດຂື້ນ, ອີກທັງເຫັນຫລັກຖານອັນແນ່ນອນເພື່ອຄຣິສຕຽນ ກໍຄືການປ່ຽນ
ແປງທີ່ເກີດຂື້ນໃນຊີວິດ. ແລະແນ່ນອນ, ຊາຍຜູ້ນັ້ນກໍໄດ້ຮຽນຮູ້ແລະເຂົ້າໃຈໃນພຣະຄຣິດ, ດ້ວຍການທົດສອບປະສົບ
ການຂອງຕົວເອງໂດຍພຣະຄໍາຂອງພຣະເຈົ້າ. ແຕ່ໃນເວລາທີ່ຍັງເປັນສິ່ງໃຫມ່ສໍາລັບລາວນັ້ນ, ລາວກໍຍັງເວົ້າຄໍາດຽວ
ທີ່ເປັນເຫດຜົນກໍຄືຕາຂອງລາວທີ່ບອດມາແຕ່ກໍາເນີດນັ້ນ, ບັດນີ້ໄດ້ເຫັນຮຸ່ງແລ້ວ. ດ້ວຍຄວາມສົງໃສແຕ່ກ່ອນນັ້ນວ່າ
ເປັນຍ້ອນບາບຂອງຕົວເອງຫລືຂອງພໍ່ແມ່ກັນແທ້ທີ່ເຮັດໃຫ້ລາວຕາບອດ. ແລະດຽວນີ້ລາວຮູ້ແລ້ວວ່າພຣະເຈົ້າຊົງຮັກ
ແລະພຣະອົງຊົງມີແຜນການສໍາລັບຊີວິດຂອງລາວໄວ້ແລ້ວ. ພວກຫົວຫນ້ານັກທັມບໍ່ສາມາດເຮັດໃຫ້ລາວປະຕິເສດ
ໃນຄໍາພະຍານໃນເຣື່ອງນີ້ໄດ້. ພວກເຂົາຈື່ງໄລ່ລາວອອກໄປ, ທັງຫົວເຍາະເຢີ້ຍແລະດູຖູກຄໍາພະຍານຂອງລາວ.
ແຕ່ລາວກໍຍັງເວົ້າຄວາມເກົ່າຄືຍັ້ງຢືນວ່າ, ຖ້າພຣະເຢຊູບໍ່ໄດ້ມາຈາກພຣະເຈົ້າແລ້ວ, ເພິ່ນຈະເຮັດໃຫ້ຂ້ານ້ອຍເຫັນຮຸ່ງ
ໄດ້ຫລື? ພວກຫົວຫນ້ານັກທັມກໍບໍ່ມີຄໍາຕອບອັນໃດໃນຄໍາຖາມນີ້.

### 4. <u>ເຈົ້ານາຍເອີຍ, ຂ້ານ້ອຍວາງໃຈເຊື່ອແລ້ວ</u> ( ໂຢຮັນ 9:35-39 )

ຊາຍຜູ້ນັ້ນຖືກໄລ່ອອກຈາກພວກຫົວຫນ້ານັກທັມ, ພຣະເຢຊູໄດ້ຊົງນໍາຄວາມຫມັ້ນໃຈມາໃຫ້ລາວເພາະລາວໄດ້
ເວົ້າແລະໄດ້ເຮັດໃນສິ່ງທີ່ຖືກຕ້ອງແລ້ວ. ເມື່ອພຣະເຢຊູຊົງພົບລາວຈື່ງຖາມລາວວ່າ " ເຈົ້າໄວ້ວາງໃຈບຸດມະນຸດຫລື? ".
ຄວາມຫມາຍກໍເພື່ອຈະບອກໃຫ້ຮູ້ວ່າເປັນພຣະເມສີອາ, ແລະລາວບໍ່ຮູ້ພຣະອົງບອກວ່າແມ່ນພຣະອົງນັ້ນແຫລະທີ່ເປັນ.
ຊາຍຄົນນັ້ນຕອບວ່າ " ນາຍເຈົ້າເອີຍຂ້ານ້ອຍວາງໃຈເຊື່ອແລ້ວ! " ແລະຜົນຈາກການຮັບເຊື່ອກໍຄືການນະມັສການພຣະ
ເຢຊູວ່າຊົງເປັນພຣະຜູ້ເປັນເຈົ້າ. ແລ້ວພຣະເຢຊູກໍຊົງສະແດງໃຫ້ຮູ້ວ່າແມ່ນພຣະອົງນັ້ນແລະເປັນຜູ້ທີ່ສະເດັດເຂົ້າມາໃນ
ໂລກນີ້ເພື່ອທີ່ຈະໄດ້ເປີດຕາຝ່າຍຈິດວິນຍານ. ສໍາຫລັບຜູ້ທີ່ເຂົາຄິດວ່າເຂົາຕາດີແລ້ວຈະກາຍເປັນຕາບອດທາງຈິດວິນ
ຍານແທນ ( ຄືພວກຫົວຫນ້ານັກທັມ ) ຄືເຂົາຄິດວ່າເຂົາໄດ້ປະຕິບັດຄົບຖ້ວນແລ້ວໃນພຣະທັມແຕ່ຊີວິດຈິງບໍ່ໄດ້ມີການ
ປ່ຽນແປງຄືຮັບເອົາພຣະເຢຊູພວກເຂົາກໍຕາບອດທີ່ບໍ່ຮູ້ວ່າພຣະເຢຊູແມ່ນຜູ້ໃດ ແລະພຣະອົງໄດ້ຊົງກະທໍາພາຣະກິດອັນ
ໃດແດ່.

ທັງຫມົດໃນພຣະທັມຕອນນີ້, ຊາຍຕາບອດກໍຄາໃຈຢູ່ໃນເຣື່ອງການຄົ້ນພົບວ່າພຣະເຢຊູແມ່ນຜູ້ໃດລາວໄດ້ເອີ້ນພຣະ
ອົງວ່າຜູ້ປະກາດພຣະທັມ ( ຂໍ້ 17 ) ຈາກພຣະເຈົ້າ ( ຂໍ້ 33 ), ແລະ ນາຍເຈົ້າເອີຍ ( ຂໍ້ 38 ). ໂດຍຜ່ານເຫດການ
ທີ່ໄດ້ເກີດຂື້ນກັບລາວແລະການຊົງເປີດເຜີຍຂອງພຣະເຢຊູວ່າເປັນດ້ວຍເຫດໃດພຣະອົງຈື່ງໄດ້ສະເດັດມາໃຫ້ໂຜດລາວ
ຍອມຮັບ "ນາຍເຈົ້າເອີຍ, ຂ້ານ້ອຍວາງໃນເຊື່ອແລ້ວ ". ຄົນເຮົາອາດຈະເຂົ້າໃຈພຣະເຢຊູຕາມລະດັບຄວາມຮັບຮູ້ຂອງ
ຕົນ, ແຕ່ກໍຍັງຊອກຫາແລະສັນຍາທີ່ຈະມອບຊີວິດໃຫ້ກັບພຣະອົງເພື່ອພຣະອົງຈະໄດ້ນໍາພາຊີວິດພວກເຂົາຕໍ່ໄປ.

ໂດຍຜ່ານການຕາບອດຝ່າຍຈິດວິນຍານມາເປັນເວລາດົນນານ, ແລະບັດນີ້ພຣະເຢຊູໄດ້ຊົງເປີດຕາໃຫ້ພວກເຮົາໄດ້ເຫັນຮຸ່ງເຖິງເຣື່ອງຄວາມຈິງວ່າພຣະເຈົ້າຊົງຮັກພວກເຮົາແລະພຣະອົງມີຄວາມຕ້ອງການທີ່ຈະມີຄວາມສຳພັນກັບພວກເຮົາຄື:

## ບົດຮຽນຊີວິດ

- ຄວາມສຳພັນທີ່ຈະປ່ຽນແປງພວກເຮົາຈາກຊີວິດເກົ່າເພື່ອຈະມີຊີວິດໃໝ່ໃນພຣະຄຣິດ.
- ຄວາມສຳພັນທີ່ຜູ້ອື່ນອາດຈະບໍ່ເຂົ້າໃຈເລີກເຊິ່ງເທົ່າກັບເຮົາ.
- ຄວາມສຳພັນທີ່ບໍ່ສາມາດທີ່ຈະປະຕິເສດໄດ້ຈາກຜູ້ທີ່ບໍ່ເຊື່ອ.
- ຄວາມສຳພັນທີ່ຈະນຳໃຫ້ພວກເຮົາໄປເຖິງການຖວາຍຕົວແກ່ອົງພຣະເຢຊູ.

**ດັ່ງນັ້ນພວກເຮົາຈະເຮັດສິ່ງໃດແດ່ຈາກຈຸດເດັ່ນຂອງບົດຮຽນນີ້?**

- ຊອກຫາໂອກາດທີ່ຈະໄດ້ແບ່ງປັນປະສົບປະການທີ່ພວກເຮົາມີກັບພຣະເຢຊູ.
- ໃຫ້ພຣະເຈົ້າໄດ້ຮັບກຽດໃນທຸກສິ່ງທີ່ພຣະອົງໄດ້ກະທຳ.
- ເຂົ້າໃຈວ່າພວກເຮົາບໍ່ຈຳເປັນຕ້ອງມີຄຳຕອບທຸກຢ່າງໃນການທີ່ຈະແບ່ງປັນຄວາມເຊື່ອຂອງພວກເຮົາ

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org (ap ແປແລະຮຽບຮຽງ)